**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ

ຫ້ອງການຄຸ້ມຄອງວິທະຍາສາດ ເລກທີ 224 /ຫຄວ

ນະຄອນຫຼວງວຽງຈັນ, ວັນທີ 01 ສິງຫາ **2024**

# ແຈ້ງການ

**ເຖິງ: ບັນດາສະຖາບັນຄົ້ນຄວ້າ, ສູນຄົ້ນຄວ້າ, ສະຖາບັນການສຶກສາຂັ້ນສູງ ແລະ ນັກຄົ້ນຄວ້າ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.**

**ເລື່ອງ:** ການເປີດຮັບບົດຄົ້ນຄວ້າວິທະຍາສາດ ເພື່ອກະກຽມຈັດກອງປະຊຸມເຜີຍແຜ່ຜົນການຄົ້ນຄວ້າ ປະຈໍາປີ 2024 ພາຍໃຕ້ຫົວຂໍ້: ກອງປະຊຸມແລກປ່ຽນຄວາມຄິດເຫັນ ກ່ຽວກັບການຄົ້ນຄວ້າ ແລະ ນະໂຍບາຍພັດທະນາເສດຖະກິດ-ສັງຄົມ ປະຈໍາປີ 2024 (Socio-Economic Policy and Research Exchange Forum 2024).

- ອີງຕາມ ຂໍ້ຕົກລົງ ຂອງປະທານສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງຫ້ອງການຄຸ້ມຄອງວິທະຍາສາດ ສະບັບເລກທີ 003/ສວສສຊ, ລົງວັນທີ 11 ມັງກອນ 2022.
- ອີງຕາມ ຜົນກອງປະຊຸມສະຫຼຸບຜົນກອງປະຊຸມເຜີຍແຜ່ຜົນການຄົ້ນຄວ້າປະຈໍາປີ 2023 ແລະ ທິດທາງແຜນການການ ປີ 2024 ຄັ້ງວັນທີ 29-30 ມັງກອນ 2024.
- ອີງຕາມ ບົດບັນທຶກຄວາມເຂົ້າໃຈ (MOU) ລະຫວ່າງຫ້ອງການຄຸ້ມຄອງວິທະຍາສາດ, ສວສສຊ ແລະ ສະມາຄົມສົ່ງເສີມຊຸມຊົນສີຂຽວ ຄັ້ງວັນທີ 25 ສິງຫາ 2023.

ຫ້ອງການຄຸ້ມຄອງວິທະຍາສາດ, ສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ ໂດຍການຮ່ວມມືກັບສະມາຄົມຊຸມຊົນສີຂຽວ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບກ່ຽວກັບການເປີດຮັບບົດຄົ້ນຄວ້າວິທະຍາສາດ ເພື່ອກະກຽມຈັດກອງປະຊຸມເຜີຍແຜ່ຜົນການຄົ້ນຄວ້າ ປະຈໍາປີ 2024 ເຊິ່ງຈະໄດ້ຈັດຂຶ້ນໃນລະຫວ່າງກາງເຖິງທ້າຍເດືອນພະຈິກ 2024 ທີ່ຈະມາເຖິງນີ້ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

1. **ຊື່ກອງປະຊຸມ:** ກອງປະຊຸມແລກປ່ຽນຄວາມຄິດເຫັນ ກ່ຽວກັບການຄົ້ນຄວ້າ ແລະ ນະໂຍບາຍພັດທະນາເສດຖະກິດ-ສັງຄົມ ປະຈໍາປີ 2024 (Socio-Economic Policy and Research Exchange Forum 2024) ເຊິ່ງເປັນເວທີໃນການເຜີຍແຜ່ຜົນການຄົ້ນຄວ້າວິທະຍາສາດ ຂອງນັກຄົ້ນຄວ້າ ສປປ ລາວ ທີ່ໄດ້ຈັດຂຶ້ນໃນທຸກໆປີ ແນໃສ່ປະກອບສ່ວນຂໍ້ມູນດ້ານວິທະຍາສາດ ໃຫ້ແກ່ພັກ-ລັດ ສາມາດນໍາໃຊ້ເຂົ້າໃນການວາງແຜນແນວທາງ, ນະໂຍບາຍ, ແຜນພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ.
2. **ຫົວຂໍ້ບົດຄົ້ນຄວ້າ ແບ່ງອອກເປັນ 4 ຂົງເຂດໃຫຍ່ຄື:**

1). **ຂົງເຂດເສດຖະກິດ:** ແມ່ນຈະສຸມໃສ່ ຫົວຂໍ້ທີ່ກ່ຽວຂ້ອງກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ໂດຍສະເພາະແມ່ນການຮັກສາສະຖຽນລະພາບທາງດ້ານການເງິນ, ເງິນຕາ, ລາຍຮັບ-ລາຍຈ່າຍ, ການຜະລິດເປັນສິນຄ້າພາຍໃນ ແລະ ອື່ນໆ.

2). **ຂົງເຂດເສດສັງຄົມ:** ແມ່ນຈະສຸມໃສ່ຜົນກະທົບ ແລະ ການແກ້ໄຂຜົນກະທົບ ຂອງຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນຕໍ່ການພັດທະນາຂະແໜງການສັງຄົມທີ່ມີຄວາມສ່ຽງ ແລະ ຄວາມບອບບາງຕໍ່ຄວາມຫຍຸ້ງຍາກດັ່ງກ່າວ ເຊັ່ນ: ຜົນກະທົບຕໍ່ການຫລຸດຜ່ອນຄວາມທຸກຍາກ, ການເຄື່ອນຍ້າຍແຮງງານ, ການປະລະການສຶກສາ, ການປະລະວຽກງານປະຈໍາ (ພະນັກງານລັດ), ການແຕ່ງງານກ່ອນໄວ (ເດັກນ້ອຍທີ່ບໍ່ຮອດອາຍຸ 18 ປີ), ການແຕ່ງງານກັບຄົນຕ່າງປະເທດ, ສາທາລະນະສຸກ, ບົດບາດຍິງ-ຊາຍ, ສິດທິມະນຸດ ແລະ ອື່ນໆ.

3). **ຂົງເຂດຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ:** ແມ່ນຈະສຸມໃສ່ການຄຸ້ມຄອງ, ນໍາໃຊ້ ແລະ ສ້າງລາຍຮັບຈາກຊັບພະຍາກອນທໍາມະຊາດຢ່າງມີປະສິດທິພາບ, ປະສິດທິຜົນ ແລະ ມີຄວາມຍືນຍົງ, ການປັບຕົວເຂົ້າກັບສະພາບການປ່ຽນແປງ ຂອງດິນຟ້າອາກາດ, ເສດຖະກິດໝູນວຽນ, ການຄຸ້ມຄອງສິ່ງເສດເຫຼືອ, ການຄຸ້ມຄອງຕົວເມືອງ, ການຂະຫຍາຍຕົວເມືອງ ແລະ ບັນຫາສິ່ງແວດລ້ອມອື່ນໆ.

4). **ຂົງເຂດລັດແຫ່ງກົດໝາຍ**: ແມ່ນສຸມໃສ່ການບໍລິຫານລັດ, ການຜັນຂະຫຍາຍແນວທາງ, ນະໂຍບາຍ ຂອງພັກ-ລັດ, ປະຕິບັດບັນດາກົດໝາຍ, ນິຕິກໍາລຸ່ມກົດໝາຍ ແລະ ອື່ນໆ.

**3. ເງື່ອນໄຂການສົ່ງບົດຄົ້ນຄວ້າວິທະຍາສາດ ມີດັ່ງນີ້:**

- ບັນດານັກຄົ້ນຄວ້າທີ່ສັງກັດບັນດາກະຊວງ, ອົງການພັກ-ລັດ, ອົງການຈັດຕັ້ງມະຫາຊົນ ແລະ ພາກສ່ວນຕ່າງໆທີ່ມີຄວາມສົນໃຈ ແລະ ມີບົດຄົ້ນຄວ້າວິທະຍາສາດທີ່ຢູ່ໃນຂົງເຂດຫົວຂໍ້ຄົ້ນຄວ້າທີ່ກໍານົດໄວ້ໃນ ຂໍ້ 2.
- ຕ້ອງແມ່ນບົດຄົ້ນຄວ້າທີ່ໄດ້ຈັດຕັ້ງປະຕິບັດການຄົ້ນຄວ້າ, ມີຜົນການຄົ້ນຄວ້າສໍາເລັດແລ້ວ ແລະ ຜົນໄດ້ຮັບ ຂອງບົດຄົ້ນຄວ້າຕ້ອງຕິດພັນກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.
- ບົດຄົ້ນຄວ້າຈະໄດ້ຂຽນຕາມຮ່າງແບບຟອມທີ່ຫ້ອງການຄຸ້ມຄອງກໍານົດໄວ້ (ຄັດຕິດມາພ້ອມນີ້).
- ກໍານົດສົ່ງບົດຄົ້ນຄວ້າ ກ່ອນວັນທີ **26 ສິງຫາ 2024** (ລາຍລະອຽດຕິດຕໍ່ກອງເລຂາຕາມເບີທີ່ໄດ້ລະບຸໄວ້).

ພາຍຫຼັງໄດ້ຮັບບົດຄົ້ນຄວ້າຈາກບັນດາທ່ານຢ່າງຄົບຖ້ວນແລ້ວ ພວກເຮົາຈະໄດ້ເຊີນນັກຄົ້ນຄວ້າອາວຸໂສທີ່ມີປະສົບການ ແລະ ມີຜົນງານຄົ້ນຄວ້າດີເດັ່ນຈາກພາກສ່ວນຕ່າງໆເຂົ້າຮ່ວມຂະບວນການພິຈາລະນາຄັດເລືອກບົດຄົ້ນຄວ້າດັ່ງກ່າວຈໍານວນຫຼາຍຮອບ ເພື່ອໃຫ້ໄດ້ບົດຄົ້ນຄວ້າທີ່ດີເດັ່ນໄປເຜີຍແຜ່ໃນກອງປະຊຸມເຜີຍແຜ່ການຄົ້ນຄວ້າປະຈໍາປີ 2024. ນອກນັ້ນ, ບົດຄົ້ນຄວ້າທີ່ດີເດັ່ນທີ່ໄດ້ຮັບການຄັດເລືອກຈະໄດ້ຮັບລາງວັນ (Honorarium) ຈາກສະມາຄົມຊຸມຊົນສີຂຽວ (GCA).

ດັ່ງນັ້ນ, ຈຶ່ງຖືເປັນກຽດແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ພິຈາລະນາເຂົ້າຮ່ວມຕາມທາງຄວນດ້ວຍ.

**ຫົວໜ້າຫ້ອງການຄຸ້ມຄອງ**

**ປອ. ສາຍຄໍາ ວໍລະເດດ**

**ກະລຸນາຕິດຕໍ່:**

- ທ່ານ ໂກວິດ ໄຊຍະສິດ 020 5953 9621
- ທ່ານ ນ. ມະນີວັນ ອິນທະມີໄຊ 020 54555524

# ແບບພິມບົດສະເໜີຜົນການຄົ້ນຄວ້າ

| | |
|---|---|
| **ຊື່ຫົວຂໍ້:** | |
| **ເຈົ້າຂອງຫົວຂໍ້:** | |
| **E-mail:** | **ເບີໂທ:** |

**I. ພາກສະເໜີ**

1.1. **ບົດສັດຫຍໍ້** (Abstract)

1.2. **ຄວາມເປັນມາ, ຄວາມຈຳເປັນ ຂອງການຄົ້ນຄວ້າ**

1.3. **ເປົ້າໝາຍ ຂອງການຄົ້ນຄວ້າ**

1.4. **ຈຸດປະສົງ ແລະ ຄຳຖາມຄົ້ນຄວ້າ**

1.5. **ຂອບເຂດການຄົ້ນຄວ້າ**

1.6. **ກອບແນວຄວາມຄິດ ແລະ ທິດສະດີນຳໃຊ້ເຂົ້າໃນການຄົ້ນຄວ້າ**

1.7. **ວິທີວິທະຍາໃນການຄົ້ນຄວ້າ**

**II. ພາກເນື້ອໃນ**

2.1. **ຜົນໄດ້ຮັບຈາກການຄົ້ນຄວ້າ**

2.2. **ບັນຫາທີ່ຕັ້ງຂຶ້ນ/ກາລະໂອກາດ/ສິ່ງທ້າທາຍ/ທ່າອ່ຽງ**

**III. ພາກທິດທາງ ແລະ ວິທີແກ້ໄຂ**

3.1. **ທິດທາງໃນຕໍ່ໜ້າ**

3.2. **ວິທີແກ້ໄຂ**

3.3. **ຂໍ້ສະເໜີແນະ**

**ສະຫຼຸບ**

**ໝາຍເຫດ:**

- ບົດຄົ້ນຄວ້າຕ້ອງໄດ້ນຳໃຊ້ແນວຄວາມຄິດ ແລະ ທິດສະດີໃນການວິເຄາະ ດ້ວຍ **PESTEL** ຫຼື ຕ້ອງສ່ອງແສງໃຫ້ເຫັນບັນດາດ້ານທີ່ລະບຸໄວ້ໃນ **PESTEL**: ປັດໄຈທາງດ້ານການເມືອງ, ເສດຖະກິດ, ສັງຄົມ, ເຕັກໂນໂລຢີ-ນະວັດຕະກຳ, ສິ່ງແວດລ້ອມ ແລະ ກົດໝາຍ.
- ຜົນໄດ້ຮັບຈາກການຄົ້ນຄວ້າ ຕ້ອງສະແດງໃຫ້ເຫັນວ່າ: ສາມາດຄົ້ນພົບບັນຫາທີ່ພົ້ນເດັ່ນ, ສິ່ງໃໝ່ໆ, ແນວຄິດໃໝ່, ວິທີການໃໝ່ ຫຼື ບັນຫາໃໝ່ໆ ຄືແນວໃດ?
- ການວິເຄາະ, ວິໄຈຜົນໄດ້ຮັບຈາກການຄົ້ນຄວ້າ, ທິດທາງ, ວິທີແກ້ໄຂ ຕ້ອງຕິດພັນກັບແຜນພັດທະນາເສດຖະກິດ-ສັງຄົມ ແນໃສ່ຊ່ວຍເປັນຂໍ້ມູນໃຫ້ແກ່ພັກ-ລັດ ສາມາດນຳໃຊ້ເຂົ້າໃນການວາງແຜນແນວທາງ, ນະໂຍບາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແກ້ໄຂບັນຫາໃຫ້ຖືກຕາມສະພາບຕົວຈິງ.
- ບົດສະເໜີຜົນການຄົ້ນຄວ້າ ປະມານ 10-15 ໜ້າ ເຈ້ຍ **A4** ດ້ວຍຂະໜາດຕົວໜັງສື 12, ເທິງ ແລະ ລຸ່ມ 2,5 ຊມ, ຊ້າຍ 3 ຊມ ແລະ ຂວາ 2 ຊມ.

ນະຄອນຫຼວງວຽງຈັນ, ວັນທີ..............................

**ເຈົ້າຂອງຫົວຂໍ້**